ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1837/ທຄຕລ..................
ນະຄອນຫຼວງວຽງຈັນ, ວັນທີ:....26 MAY 2026........

# ແຈ້ງເຊີນປະມູນ

**ເຖິງ :** ທ່ານ ຜູ້ອຳນວຍການ ບໍລິສັດປະກັນໄພ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ເຮັດປະກັນໄພຊັບສິນຂອງ ທຄຕລ ທົ່ວລະບົບ ປະຈຳປີ 2026 – 2027.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນເຮັດປະກັນໄພຊັບສິນ ຂອງ ທຄຕລ ທົ່ວລະບົບ, ເຊິ່ງມີລາຍການລຸ່ມນີ້:

**1. ການປະກັນໄພຄວາມສ່ຽງຊັບສິນ (Property All Risks Insurance)**

- ຕຶກອາຄານ (ລວມໂຄງສ້າງ ແລະ ຊັບສິນພາຍໃນອາຄານ).
- ຕູ້ ATM, CDM ,CRM ແລະ ຕູ້ແລກປ່ຽນເງິນ TA24 Slim Device.
- ອຸປະກອນໄອທີ Server.
- ເຮືອນແກ້ວຄອບຕູ້ ATM.

(ລາຍລະອຽດເພີ່ມຕື່ມ ແມ່ນຂໍ້ 1.7)

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

❖ **<u>ເອກະສານຊອງທີ 01 (ຄຸນວຸດທິ ແລະ ປະສົບການ):</u>**

1.1 ປະກອບເອກະສານໃນນາມນິຕິບຸກຄົນ ໂດຍສຳເນົາເອກະສານ: ① ໃບທະບຽນວິສາຫະກິດ, ② ໃບອະນຸຍາດດຳເນີນດ້ານການປະກັນໄພ, ③ ໃບຢັ້ງຢືນການເສຍອາກອນປະຈຳປີ 2023, 2024, 2025.

1.2 ບໍລິສັດຕ້ອງດຳເນີນທຸລະກິດປະກັນໄພ ຢ່າງໜ້ອຍ 05 ປີຂຶ້ນໄປ ແລະ ມີວິຊາການຊຳນານງານສະເພາະດ້ານ.

1.3 ສຳເນົາໃບຢັ້ງຢືນຜົນງານ ແລະ ປະສົບການທີ່ຜ່ານມາ (ໃຫ້ບໍລິການວຽກງານປະກັນກັບທະນາຄານທຸ ລະກິດມາກ່ອນ).

1.4 ບໍລິສັດ ຕ້ອງມີການກວດສອບຈາກ ບໍລິສັດກວດສອບພາຍນອກ ເຊັ່ນ: ບໍລິສັດ PWC, ບໍລິສັດ Deloitte, ບໍລິສັດ EY ແລະ ບໍລິສັດ KPMG ຢ່າງໜ້ອຍ 02 ປີຜ່ານມາ.

1.5 ທຄຕລ ຈະມີຕາຕະລາງລາຍການເງື່ອນໄຂຂອງສັນຍາປະກັນໄພ ໃຫ້ບໍລິສັດທີ່ເຂົ້າຮ່ວມປະມູນ ໝາຍໃສ່ຕາຕະລາງລາຍການ ທີ່ບໍລິສັດເຂົ້າຮ່ວມປະມູນນັ້ນ ສາມາດປະຕິບັດເງື່ອນໄຂປະກັນໄພໄດ້ ພ້ອມດ້ວຍລົງລາຍເຊັນ ແລະ ປະທັບຕາໃສ່ເອກະສານ (ເອກະສານແມ່ນແນບທ້າຍໃບແຈ້ງເຊີນ).

1.6 ເອກະສານ ຂໍ້ 1.1 ເຖິງ 1.5 ແມ່ນສົ່ງຟາຍ pdf ເຂົ້າ Email: procurement@bcel.com.la, ໂດຍສົ່ງກ່ອນ ວັນສຸກ, ທີ 29/05/2026 ເວລາ 14:00 ໂມງ.

1.7 ບໍລິສັດທີ່ເຂົ້າຮ່ວມປະມູນ ຫາກຜ່ານການກວດເອກະສານໃນຊອງທີ 1 ສຳເລັດ ແລະ ຄົບຖ້ວນ ທາງ ທຄຕລ ຈຶ່ງຈະສົ່ງຂໍ້ມູນຕົວເລກໃຫ້ເພື່ອຄິດໄລ່ຄ່າທຳນຽມໃນຂັ້ນຕອນຕໍ່ໄປ ແລະ ຕ້ອງໄດ້ເຊັນສັນຍາບໍ່ເປີດເຜີຍຂໍ້ມູນ (NDA) ສຳລັບຮ່າງເອກະສານແມ່ນ ທຄຕລ ຈະສະໜອງໃຫ້.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ **<u>ເອກະສານຊອງທີ 02 (ຊອງປະມູນລາຄາ):</u>**

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ **ໃນວັນອັງຄານ , ທີ 09/06/2026 ເວລາ 09:00 ໂມງ**. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5/2 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາຄ່າທຳນຽມ, ຄ່າລົງທະບຽນ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.

- ກຳນົດອັດຕາຄ່າທຳນຽມ, ວິທີການຄິດໄລ່ ແລະ ຍອດສະສົມສູງສຸດຂອງສິນທົດແທນ;
- ການກຳນົດອັດຕາແລກປ່ຽນໃນການຄິດໄລ່ເພື່ອກຳນົດຄ່າທຳນຽມ ແລະ ອັດຕາແລກປ່ຽນໃນການຄິດໄລ່ທົດແທນ;

2.3 ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ (ຕາມໃບສະເໜີລາຄາ) ດ້ວຍໜັງສືຄ້ຳປະກັນທີ່ອອກໂດຍ ທຄຕລ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງສິ້ນສຸດ ວັນທີ 30/08/2026) ຫຼື ແຊັກທີ່ວີຊ່າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສືຄ້ຳປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສຳເລັດການເຊັນສັນຍາ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄ້ຳປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຮັບຊອງໃບສະເໜີລາຄາ.

❖ **<u>ໝາຍເຫດ:</u>**

- ທຄຕລ ຂໍສະຫງວນສິດໃນການປະຕິເສດບໍລິສັດ ທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ທຄຕລ ຈະພິຈາລະນາຄັດເລືອກຜູ້ສະໜອງ ຈາກຫຼາຍເງື່ອນໄຂ: ອັດຕາຄ່າທຳນຽມ, ການຄຸ້ມຄອງ-ການທົດແທນຜົນເສຍຫາຍ ແລະ ການບໍລິການອື່ນໆ (ຈະບໍ່ໄດ້ພິຈາລະນາດ້ານລາຄາພຽງຢ່າງດຽວ).

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ບໍລິສັດທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ;
- ເອກະສານຊອງທີ 1 ແມ່ນຈະຖືວ່າເປັນເງື່ອນໄຂສ່ວນໜຶ່ງຂອງສັນຍາ.
- ສັນຍາຕ້ອງໃຊ້ພາສາລາວເປັນຫຼັກ ແລະ ນຳໃຊ້ກົດໝາຍລາວ ໃນການກຳນົດແກ້ໄຂຂໍ້ຂັດແຍ້ງ, ສຳລັບພາສາຕ່າງປະເທດໃຫ້ຖືເປັນສະບັບຄັດຕິດ (ຖ້າມີ) ແລະ ຕ້ອງສົ່ງຮ່າງໃຫ້ ທຄຕລ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ການຊຳລະຄ່າທຳນຽມປະກັນໄພແມ່ນຈ່າຍເງິນງວດດຽວ 100% ຕາມສັນຍາ ພາຍຫຼັງສຳເລັດການເຊັນສັນຍາວ່າຈ້າງ, ສຳເລັດຈົດທະບຽນສານ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 15 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

ຜູ້ປະສານງານ:
ນາງ ພຸດທິດາ ດວງມະນີ ໂທ: 020 56656454
021 213201 ຕໍ່ 414

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ) (Form 1)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | ໝາຍເຫດ |
|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ກວດສອບພາຍນອກ | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ....................................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

## ເງື່ອນໄຂການປະກັນໄພ ປະກັນໄພຊັບສິນຂອງ ທຄຕລ 2026-2027 (Form 2)

| ລ/ດ | ເງື່ອນໄຂການປະກັນໄພ | ຄຸ້ມຄອງ | ບໍ່ຄຸ້ມຄອງ ຫຼື ຍົກເວັ້ນ | ໝາຍເຫດ |
|---|---|---|---|---|
| 1 | ຊັບສິນທີ່ ທຄຕລ ກຳນົດມູນຄ່າຕົວຈິງຕາມສັນຍາ (ບໍ່ຫັກຄ່າຫຼຸ້ຍຫ້ຽນ) | | | |
| 2 | ການຄຸ້ມຄອງທີ່ເປັນວົງເງິນ ແມ່ນໃຫ້ແຕ່ລະບໍລິສັດແຈ້ງວົງເງິນສູງສຸດໃນໃບສະເໜີລາຄາ | | | |
| 3 | ໃນສັນຍາປະກັນໄພບໍ່ໃຫ້ມີ ຄວາມຮັບຊອບຮ່ວມ ( Deductible ) ເວລາເກີດອຸບັດຕິເຫດ | | | |
| 4 | ຄຸ້ມຄອງເຫດຈາກໄພທຳມະຊາດ ເປັນຕົ້ນແມ່ນ: ນ້ຳຖ້ວມ, ພາຍຸ, ຟ້າຜ່າ, ແຜ່ນດິນໄຫວ ແລະ ຕາມເງື່ອນໄຂຂອງກົດໝາຍຂອງ ສປປລາວ | | | |
| 5 | ຄຸ້ມຄອງເຫດການອັກຄີໄພທັງຈາກຊັບສິນເອງ ຫຼື ເກີດຈາກການລຸກລາມຈາກຊັບສິນອ້ອມຂ້າງ | | | |
| 6 | ການກະທຳຈາກບຸກຄົນທີ 3 ທີ່ພາໃຫ້ຊັບສິນເສຍຫາຍ | | | |
| 7 | ອັດຕາແລກປ່ຽນກຳນົດເອົາຕາມວັນທີທົດແທນ (ອັດຕາຂາຍລອຍຕົວ) | | | |
| 8 | ຕູ້ ATM CDM CRM ແລະ ຕູ້ແລກປ່ຽນເງິນຕາທີ່ມີຜູ້ສະໜອງຈຳກັດໃນການສ້ອມແປງ ແລະ ປ່ຽນແທນອາໄຫຼ່ | | | |
| 9 | ສັນຍາ ຕ້ອງນຳໃຊ້ພາສາລາວ ເປັນຫຼັກ ແລະ ຄຸ້ມຄອງໂດຍກົດໝາຍຂອງ ສປປ ລາວ | | | |
| 10 | ຮັບຜິດຊອບຄ່າທຳນຽມຈົດທະບຽນສານ | | | |

| | | | | |
|---|---|---|---|---|
| 11 | ການທົດແທນຜົນເສຍຫາຍໃນການສ້ອມແປງ ຫຼື ປ່ຽນແທນ ອາໄຫຼ່ ບໍ່ເກີນ 5 ວັນລັດຖະການ ( ອຸປະກອນທີ່ຈໍາເປັນໃນ ວຽກງານບໍລິການລູກຄ້າ ) ແລະ 15 ວັນສໍາລັບຊັບສິນອື່ນໆ | | | |
| 12 | ກໍານົດວົງເງິນຄໍ້າປະກັນສູງສຸດ (ຖ້າມີ) | | | |
| 13 | ເຄີຍໃຫ້ບໍລິການປະກັນໄພຊັບສິນ ທະນາຄານທຸລະກິດມາ ກ່ອນ | | | |
| 14 | ກໍານົດ ຫຼື ລະບຸ ເງື່ອນໄຂການຄຸ້ມຄອງ ແລະ ຂໍ້ຍົກເວັ້ນ (ເງື່ອນໄຂທີ່ບໍ່ຄຸ້ມຄອງ) ຢ່າງລະອຽດ ແລະນໍາໃຊ້ໄດ້ຈິງ | | | |
| 15 | ເງື່ອນໄຂອື່ນໆ (ຖ້າມີ) | | | |
| | | | | |
| | | | | |

ນະຄອນຫຼວງວຽງຈັນ, ວັນທີ ................................

ຜູ້ອໍານວຍການບໍລິສັດ